ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມ ຄຕຟງ ທ້າຍສະໄໝ ປີ 2020



ກອງປະຊຸມຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ສະໄໝສາມັນຄັ້ງທີ III ປະຈຳປີ 2020 ໄດ້ບັນລຸຜົນຢ່າງຈົບງາມໃນວັນທີ 18 ທັນວາ 2020 ທີ່ຫ້ອງປະຊຸມໃຫຍ່ ທະນາຄານແຫ່ງ ສປປ ລາວ ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄຕຟງ, ພ້ອມນີ້, ກໍ່ມີຮອງປະທານ, ບັນດາສະມາຊິກຄະນະກຳມະການແຫ່ງຊາດ, ກອງເລຂາ ແລະ ພະນັກງານຂອງບາງກະຊວງກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້ ໄດ້ມີການປຶກສາຫາລືຫຼາຍບັນຫາທີ່ມີຄວາມສຳຄັນຕິດພັນກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຂອງ ສປປ ລາວ ໂດຍມີ 5 ເນື້ອໃນຕົ້ນຕໍໃນນີ້ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງ 4 ພາກສ່ວນ; ການປະກອບຂໍ້ມູນເພີ່ມຕື່ມບົດລາຍງານດ້ານນິຕິກຳ; ຮ່າງບົດລາຍງານດ້ານປະສິດທິຜົນ; ການຈັດຕັ້ງປະຕິບັດວຽກງານຂອງ ສຕຟງ ແລະ ວຽກງານອື່ນໆ ໂດຍສະເພາະຄວາມຄືບໜ້າການປະເມີນຮອບດ້ານວຽກງານຕ້ານການຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍຂອງ ສປປ ລາວ ຈາກ APG ແລະ ຜູ້ປະເມີນຈາກ 6 ປະເທດ (ສປຈີນ, ອິນໂດເນເຊຍ, ມາເລເຊຍ, ນິວຊີແລນ, ສີລັງກາ ແລະ ໄທ). ການປະເມີນດັ່ງກ່າວໄດ້ເລີ່ມຈັດຕັ້ງປະຕິບັດໃນເດືອນມີນາ 2020, ປະຈຸບັນຢູ່ໃນລະຫວ່າງການສັງລວມບັນດານິຕິກຳທີ່ກ່ຽວຂ້ອງ ແລະ ຂັ້ນຕອນການຈັງຕັ້ງປະຕິບັດລວມທັງຜົນການຈັດຕັ້ງປະຕິບັດວຽກງານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະໜອງໃຫ້ທີມປະເມີນ, ຊຶ່ງໄລຍະການປະເມີນ ສປປ ລາວ ຍັງຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດບັນໜ້າວຽກທີ່ຈຳເປັນເຊັ່ນ: ວຽກງານເຜີຍແຜ່ ແລະ ເຊື່ອມຊຶມວຽກງານການຕ້ານການຟອກເງິນໃຫ້ທັງພາກລັດ, ພາກເອກະຊົນເຂົ້າໃຈ ແລະ ຮັບຮູ້ຄວາມສ່ຽງກໍ່ຄືການປ້ອງການຕ້ານຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍ, ວຽກງານທົບທວນຄືນນິຕິກຳ ແລະ ສ້າງກົນໄກຮອງຮັບຂອງບັນດາພາກສ່ວນທີ່ກ່ຽວຂ້ອງ, ວຽກງານຄຸ້ມຄອງບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານໃຫ້ມີເຄື່ອງມື ແລະ ມາດຕະການທີ່ໄດ້ມາດຖານສາກົນ ແລະ ວຽກງານການດຳເນີນຄະດີຕ້ອງຮັບປະການການສືບສວນ-ສອບສວນທາງການເງິນຄຽງຄູ່ກັບການ

ສືບສວນ-ສອບສວນການກະທຳຜິດຕົ້ນ. ທັງໝົດນັ້ນກໍ່ເພື່ອຮັບປະກັນບໍ່ໃຫ້ ສປປ ລາວ ຕົກຢູ່ໃນບັນຊີການຕິດຕາມຂອງສາກົນກ່ຽວກັບວຽກງານ AML/CFT ແລະ ຮັບປະກັນໄດ້ກັບວຽກງານ AML/CFT ຂອງ ສປປ ລາວ ໃຫ້ເປັນລະບົບ, ໄດ້ມາດຖານພ້ອມທັງຮັບປະກັນການຈັດຕັ້ງປະຕິບັດໄດ້.

ສິ່ງທີ່ກ່າວມານີ້, ຄືຄວາມຄືບໜ້າທີ່ ສປປ ລາວ ໄດ້ມີການຈັດຕັ້ງປະຕິບັດກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍຕາມແຜນການທີ່ວາງໄວ້ທັງນີ້ກໍ່ເພື່ອເຮັດໃຫ້ລະບົບເສດຖະກິດ-ການເງິນມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມເຂັ້ມແຂງ, ໝັ້ນຄົງ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ທ່ານປະທານ ຄຕຟງ ໄດ້ເນັ້ນວ່າ: ເຖິງວ່າກອງປະຊຸມຈະດຳເນີນເປັນເວລາສັ້ນ ແຕ່ກໍ່ເຕັມໄປດ້ວຍເນື້ອໃນອັນເລິກເຊິ່ງ, ບັນດາກຳມະການໄດ້ປະກອບສ່ວນຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບສູງໃນການປະກອບຄຳຄິດຄຳເຫັນຈຶ່ງເຮັດໃຫ້ກອງປະຊຸມດຳເນີນໄປດ້ວຍຜົນສຳເລັດຢ່າງຈົບງາມຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ໄດ້ກຳນົດໄວ້; ພ້ອມດຽວກັນນັ້ນ, ກໍ່ສະເໜີໃຫ້ແກ້ໄຂບັນຫາອື່ນໆທີ່ຍັງຄົງຄ້າງໃຫ້ມີຜົນສຳເລັດຕາມລະດັບຄາດໝາຍ. ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານການກະກຽມປະເມີນຂອງພວກເຮົາ, ຂ້າພະເຈົ້າຂໍມອບໃຫ້ຄະນະກຳມະການ ຊີ້ນຳກົມກອງທີ່ຕິດພັນກັບແຕ່ລະບັນຫາທີ່ຂຶ້ນກັບພາລະບົດບາດຂອງແຕ່ລະກະຊວງຢ່າງໃກ້ຊິດ ແລະ ພ້ອມທັງສະລະເວລາການເຂົ້າຮ່ວມເຮັດວຽກຕົວຈິງກັບກອງເລຂາ ດ້ວຍຄວາມຮັບຜິດຊອບສູງ ເພື່ອໃຫ້ມີຄວາມຄືບໜ້າໃນແຕ່ລະດ້ານ ຮອງຮັບໃຫ້ແກ່ການປະເມີນ ສປປ ລາວ ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ຢູ່ໃນລະດັບທີ່ດີຕາມແຜນທີ່ວາງໄວ້.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ